ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງຫຼັກຊັບ ເລກທີ 14 /ຄຄຊ
ນະຄອນຫຼວງວຽງຈັນ, ວັນທີ 03 OCT 2023

# ຂໍ້ຕົກລົງ
# ວ່າດ້ວຍການຮັບຮອງ ບໍລິສັດກວດສອບ ແລະ ນັກກວດສອບ (ສະບັບປັບປຸງ)

- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ ສະບັບປັບປຸງ ສະບັບເລກທີ 79/ສພຊ, ລົງວັນທີ 3 ທັນວາ 2019;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 291/ນຍ, ລົງວັນທີ 5 ເມສາ 2021;
- ອີງຕາມ ໜັງສືສະເໜີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 0614/ສຄຄຊ, ລົງວັນທີ 14 ກັນຍາ 2023.

**ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການເຄື່ອນໄຫວວຽກງານຂອງບໍລິສັດກວດສອບ ແລະ ນັກກວດສອບ ໃນການໃຫ້ບໍລິການດ້ານການບັນຊີ ແລະ ການກວດສອບ ໃນຂົງເຂດວຽກງານຫຼັກຊັບ ເພື່ອອຳນວຍຄວາມສະດວກ ແລະ ເປັນບ່ອນອີງໃນການເຄື່ອນໄຫວວຽກງານດັ່ງກ່າວ ໃຫ້ຖືກຕ້ອງຕາມກົດໝາຍ ແນໃສ່ຮັບປະກັນໃຫ້ວຽກງານດັ່ງກ່າວມີ ປະສິດທິພາບ, ຄວາມໂປ່ງໃສ ແລະ ຍຸຕິທຳ.

**ມາດຕາ 2 ການຮັບຮອງບໍລິສັດກວດສອບ ແລະ ນັກກວດສອບ**

ການຮັບຮອງບໍລິສັດກວດສອບ ແລະ ນັກກວດສອບ ແມ່ນ ການອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃນການໃຫ້ບໍລິການທາງດ້ານການບັນຊີ ແລະ ການກວດສອບ ໃນຂົງເຂດວຽກງານຫຼັກຊັບຢູ່ ສປປ ລາວ ຕາມຂອບເຂດການໃຫ້ບໍລິການກວດສອບທີ່ກຳນົດໄວ້ໃນ ມາດຕາ 12 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ນັກກວດສອບ ໝາຍເຖິງ ບຸກຄົນທີ່ໄດ້ຮັບໃບຢັ້ງຢືນເປັນນັກຊ່ຽວຊານບັນຊີ ຈາກ ກະຊວງການເງິນ ທີ່ເປັນພະນັກງານຂອງ ບໍລິສັດກວດສອບ ຊຶ່ງໄດ້ຮັບການຮັບຮອງຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ສາມາດເຄື່ອນໄຫວໃຫ້ການບໍລິການດ້ານການບັນຊີ ແລະ ການກວດສອບ ໃນຂົງເຂດວຽກງານຫຼັກຊັບ;

2. ນັກກວດສອບຕາມກົດໝາຍ ໝາຍເຖິງ ນັກກວດສອບ ຜູ້ທີ່ໄດ້ຮັບໃບອະນຸຍາດເປັນນັກກວດສອບຕາມກົດໝາຍຈາກ ກະຊວງການເງິນ ທີ່ມີສິດລົງລາຍເຊັນໃສ່ບົດລາຍງານການກວດສອບ ໃນນາມບໍລິສັດກວດສອບ;

3. ໜ່ວຍງານກວດສອບ (Audit team) ໝາຍເຖິງ ໜ່ວຍງານທີ່ໄດ້ຮັບການ ແຕ່ງຕັ້ງ ຫຼື ມອບໝາຍ ຈາກ ບໍລິສັດກວດສອບ ໃຫ້ດໍາເນີນການກວດສອບ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ໃນແຕ່ລະຄັ້ງ;

4. ນັກຊ່ຽວຊານບັນຊີ ໝາຍເຖິງ ບຸກຄົນທີ່ໄດ້ຮັບໃບຢັ້ງຢືນເປັນນັກຊ່ຽວຊານບັນຊີຈາກ ກະຊວງການເງິນ ຕາມກົດໝາຍທີ່ກ່ຽວຂ້ອງ;

5. ເອກະສານລາຍງານການເງິນ ໝາຍເຖິງ ເອກະສານຕ່າງໆ ຊຶ່ງປະກອບດ້ວຍ: ໃບລາຍງານຖານະການເງິນ, ໃບລາຍງານຜົນການດໍາເນີນງານ, ໃບລາຍງານກະແສເງິນສົດ, ໃບລາຍງານສ່ວນປ່ຽນແປງຂອງທຶນເຈົ້າຂອງ ແລະ ເອກະສານຊ້ອນທ້າຍເອກະສານລາຍງານການເງິນ;

6. ໃບຮັບຮອງ ໝາຍເຖິງ ເອກະສານຢັ້ງຢືນການຮັບຮອງເອົາ ບໍລິສັດກວດສອບ ແລະ ນັກກວດສອບ ເພື່ອໃຫ້ການບໍລິການດ້ານການບັນຊີ ແລະ ການກວດສອບ ໃນຂົງເຂດວຽກງານຫຼັກຊັບ ທີ່ອອກໃຫ້ໂດຍ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ;

7. ຜູ້ຮຸ້ນສ່ວນບໍລິຫານ ໝາຍເຖິງ ນັກວິຊາຊີບການບັນຊີ ທີ່ຖືຮຸ້ນ ແລະ ມີສິດຕັດສິນບັນຫາ ໃນບໍລິສັດກວດສອບ ກ່ຽວກັບການປະຕິບັດຂໍ້ຜູກພັນ ໃນການໃຫ້ບໍລິການດ້ານວິຊາຊີບ;

8. ຜູ້ຮຸ້ນສ່ວນຮັບຜິດຊອບງານ ໝາຍເຖິງ ຜູ້ຮຸ້ນສ່ວນບໍລິຫານໃນ ບໍລິສັດກວດສອບ ທີ່ມີຄວາມຮັບຜິດຊອບ ຕໍ່ ການປະຕິບັດຂໍ້ຜູກພັນ, ຜົນການກວດສອບ ແລະ ລາຍງານການກວດສອບ ຂອງບໍລິສັດກວດສອບ ແລະ ມີສິດລົງລາຍເຊັນໃສ່ບົດລາຍງານການກວດສອບໃນນາມບໍລິສັດກວດສອບ ໃນເມື່ອໄດ້ລົງທະບຽນເປັນນັກກວດສອບຕາມກົດໝາຍນໍາ ກະຊວງການເງິນ;

9. ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ໝາຍເຖິງ ບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍ ຮຸ້ນ ແລະ ຮຸ້ນກູ້, ບໍລິສັດອອກຈໍາໜ່າຍຮຸ້ນ, ບໍລິສັດອອກຈໍາໜ່າຍຮຸ້ນກູ້, ບໍລິສັດຈົດທະບຽນ, ຕະຫຼາດຫຼັກຊັບ, ກອງທຶນເພື່ອການລົງທຶນ, ສະຖາບັນສື່ກາງດ້ານຫຼັກຊັບ ແລະ ກຸ່ມເປົ້າໝາຍອື່ນຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ;

10. ກະດານຊື້ ຂາຍຫຼັກຊັບຕະຫຼາດຫຼັກຊັບລາວ ໝາຍເຖິງ ກະດານຮອງຮັບການຊື້ ຂາຍຫຼັກຊັບສໍາລັບບໍລິສັດມະຫາຊົນທີ່ຈົດທະບຽນຕາມເງື່ອນໄຂຂອງ ຕະຫຼາດຫຼັກຊັບລາວ ກໍານົດອອກໃນແຕ່ລະໄລຍະ;

11. ກະດານ ຊື້ ຂາຍ ຮຸ້ນວິສາຫະກິດ ຂະໜາດນ້ອຍ ແລະ ກາງ ໝາຍເຖິງ ກະດານຮອງຮັບການຊື້ຂາຍຫຼັກຊັບສໍາລັບວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວ ຕາມລະບຽບການກໍານົດ ແລະ ລວມທັງວິສາຫະກິດຖືກຖອນຈົດທະບຽນຈາກກະດານຊື້ ຂາຍຫຼັກຊັບຕະຫຼາດຫຼັກຊັບລາວ ແລະ ວິສາຫະກິດທີ່ບໍ່ມີຈຸດປະສົງຈົດທະບຽນໃນກະດານຊື້ ຂາຍຫຼັກຊັບຕະຫຼາດຫຼັກຊັບລາວ.

**ມາດຕາ 4 ຫຼັກການ**

ບໍລິສັດກວດສອບ ທີ່ເຄື່ອນໄຫວໃຫ້ການບໍລິການບັນຊີ ແລະ ກວດສອບໃນຂົງເຂດວຽກງານຫຼັກຊັບ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ການປະຕິບັດຕາມ ກົດໝາຍ, ມາດຕະຖານວິຊາຊີບດ້ານການບັນຊີ ແລະ ການກວດສອບ;
2. ຮັບປະກັນຄວາມເປັນເອກະລາດດ້ານວິຊາການ;

3. ຮັບປະກັນຄວາມຮອບຄອບ, ຖືກຕ້ອງ, ຄົບຖ້ວນ, ຊັດເຈນ ແລະ ທັນເວລາ;

4. ຮັບປະກັນຄວາມຍຸຕິທຳ, ໂປ່ງໃສ, ສັດຊື່ບໍລິສຸດ ແລະ ສາມາດກວດສອບໄດ້;

5. ການຮັກສາຄວາມລັບ ແລະ ມີຈັນຍາບັນດ້ານວິຊາຊີບ;

6. ສ້າງຄວາມເຊື່ອໝັ້ນໃຫ້ແກ່ຜູ້ລົງທຶນ.

**ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ນຳໃຊ້ສຳລັບ ບໍລິສັດກວດສອບ, ນັກກວດສອບ, ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການເຄື່ອນໄຫວໃຫ້ການບໍລິການດ້ານການບັນຊີ ແລະ ການກວດສອບ ໃນຂົງເຂດວຽກງານຫຼັກຊັບຢູ່ ສປປ ລາວ.

## ໝວດທີ 2
## ການຮັບຮອງເປັນບໍລິສັດກວດສອບ ແລະ ນັກກວດສອບ

**ມາດຕາ 6 (ປັບປຸງ) ເງື່ອນໄຂການຮັບຮອງເປັນບໍລິສັດກວດສອບ.**

ບໍລິສັດກວດສອບ ທີ່ມີຈຸດປະສົງໃຫ້ການບໍລິການກວດສອບໃນຂົງເຂດວຽກງານຫຼັກຊັບ ໃນ ກະດານຊື້ ຂາຍຫຼັກຊັບຕະຫຼາດຫຼັກຊັບລາວ ຕ້ອງມີເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 93. ນອກຈາກນັ້ນ ຍັງມີເງື່ອນໄຂເພີ່ມເຕີມ ດັ່ງນີ້:

1. ໄດ້ຮັບໃບອະນຸຍາດດຳເນີນທຸລະກິດຈາກ ກະຊວງການເງິນ;

2. ໄດ້ເຄື່ອນໄຫວໃຫ້ບໍລິການທາງດ້ານການກວດສອບ ຢ່າງໜ້ອຍ 2 ປີ ຢ້ອນຫຼັງ ນັບແຕ່ວັນໄດ້ຍື່ນ ຄຳຮອງຂໍການຮັບຮອງເປັນບໍລິສັດກວດສອບຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

3. ມີລະບົບຄວບຄຸມຄຸນນະພາບດ້ານການກວດສອບ (Audit Quality Control System) ທີ່ໄດ້ມາດຕະຖານດ້ານການຄວບຄຸມຄຸນນະພາບ (Standards on Quality Control) ຕາມການກຳນົດຂອງພາກສ່ວນກ່ຽວຂ້ອງ ແລະ ຖືກຕ້ອງຕາມມາດຕະການການກວດກາບັນຊີສາກົນ (International Standard) ຂອງອົງການຜູ້ກວດສອບບັນຊີສາກົນ (International Federation of Accountants ຫຼື IFAC);

4. ມີສະມາຊິກສະພາບໍລິຫານ ຢ່າງໜ້ອຍ 2 ຄົນຂຶ້ນໄປ ທີ່ເປັນນັກຊ່ຽວຊານບັນຊີ ຍົກເວັ້ນ ບໍລິສັດຈຳກັດຜູ້ດຽວ, ກໍລະນີເປັນ ບໍລິສັດຈຳກັດຜູ້ດຽວ ຕ້ອງມີຜູ້ຖືຮຸ້ນ ເປັນນັກຊ່ຽວຊານບັນຊີ ເທົ່ານັ້ນ;

5. ມີນັກກວດສອບຕາມກົດໝາຍ ຢ່າງໜ້ອຍ 2 ຄົນຂຶ້ນໄປ;

6. ມີໃບຕິດຕາມການຖືບັນຊີຈາກກະຊວງການເງິນ;

7. ມີນັກກວດສອບ ຢ່າງໜ້ອຍ 5 ຄົນຂຶ້ນໄປ;

8. ການດຳເນີນທຸລະກິດຕ້ອງມີກຳໄລ 1 ປີ ຄືນຫຼັງ ກ່ອນປີຍື່ນເອກະສານປະກອບການຂໍຮັບຮອງຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

9. ມີສັນຍາປະກັນໄພ ພ້ອມດ້ວຍນະໂຍບາຍການປະກັນໄພດ້ານວິຊາຊີບ;

10. ມີແຜນການ ກ່ຽວກັບການດຳເນີນທຸລະກິດຂອງຕົນ 3 ປີ ຕໍ່ໜ້າ ນັບແຕ່ປີຍື່ນເອກະສານປະກອບການຂໍຮັບຮອງ ເປັນຕົ້ນໄປ;

11. ມີສັນຍາຮ່ວມມືກັບ ຜູ້ຮຸ້ນສ່ວນບໍລິຫານ ພ້ອມທັງ ຊີວະປະຫວັດຫຍໍ້ຂອງ ຜູ້ຮຸ້ນສ່ວນບໍລິຫານ;

12. ບໍ່ຢູ່ໃນສະພາວະການລົ້ມລະລາຍ, ຖືກໂຈະການໃຫ້ບໍລິການກວດສອບ, ຖືກຖອນໃບທະບຽນວິສາຫະກິດ;

13. ມີໃບຢັ້ງຢືນການມອບອາກອນ ແລະ ໃບອະນຸຍາດດຳເນີນທຸລະກິດ;

14. ເງື່ອນໄຂອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ສຳລັບ ເງື່ອນໄຂການຮັບຮອງບໍລິສັດກວດສອບ ເພື່ອໃຫ້ບໍລິການກວດສອບແກ່ ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນ ແລະ ຮຸ້ນກູ້, ບໍລິສັດອອກຈຳໜ່າຍຮຸ້ນ ແລະ ຮຸ້ນກູ້ ໃນ ກະດານຊື້ ຂາຍ ຮຸ້ນວິສາຫະກິດຂະໜາດນ້ອຍ ແລະ ກາງ ແມ່ນໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນ ວັກໜຶ່ງ ຂໍ້ 1, 2, 6, 8, 12, 13 ແລະ ຂໍ້ 14 ຂອງມາດຕານີ້. ນອກຈາກນັ້ນ, ຍັງຕ້ອງມີເງື່ອນໄຂເພີ່ມເຕີມ ດັ່ງນີ້:

1. ມີສະມາຊິກສະພາບໍລິຫານ ຢ່າງໜ້ອຍ 1 ຄົນຂຶ້ນໄປ ທີ່ເປັນນັກຊ່ຽວຊານບັນຊີ ຍົກເວັ້ນ ບໍລິສັດຈຳກັດຜູ້ດຽວ;
2. ມີນັກກວດສອບຕາມກົດໝາຍ ຢ່າງໜ້ອຍ 1 ຄົນຂຶ້ນໄປ;
3. ມີນັກກວດສອບ ຢ່າງໜ້ອຍ 2 ຄົນຂຶ້ນໄປ;
4. ມີແຜນການ ກ່ຽວກັບການດຳເນີນທຸລະກິດຂອງຕົນ 1 ປີ ຕໍ່ໜ້າ ນັບແຕ່ປີຍື່ນເອກະສານປະກອບການຂໍຮັບຮອງ ເປັນຕົ້ນໄປ.

ສຳລັບບໍລິສັດກວດສອບຈາກຕ່າງປະເທດ ນອກຈາກເງື່ອນໄຂທີ່ໄດ້ກຳນົດໄວ້ໃນມາດຕານີ້ ຕ້ອງເປັນບໍລິສັດກວດສອບ ທີ່ໄດ້ຮັບການຮັບຮອງຈາກ ອົງການຄຸ້ມຄອງວຽກງານຫຼັກຊັບຂອງປະເທດທີ່ບໍລິສັດດັ່ງກ່າວສ້າງຕັ້ງ ແລະ ເຄື່ອນໄຫວຢູ່.

**ມາດຕາ 7 (ປັບປຸງ) ເອກະສານປະກອບການຂໍຮັບຮອງເປັນບໍລິສັດກວດສອບ**

ເອກະສານປະກອບການຂໍຮັບຮອງເປັນບໍລິສັດກວດສອບ ຕ້ອງປະຕິບັດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 94. ນອກຈາກນັ້ນ ຍັງມີເອກະສານເພີ່ມເຕີມ ດັ່ງນີ້:

1. ສຳເນົາໃບຢັ້ງຢືນ ເປັນນັກຊ່ຽວຊານບັນຊີ;
2. ສຳເນົາໃບອະນຸຍາດເປັນນັກກວດສອບຕາມກົດໝາຍ;
3. ໃບຢັ້ງຢືນຈາກສານປະຊາຊົນນະຄອນຫຼວງວຽງຈັນ ບໍ່ໃຫ້ກາຍ 3 ເດືອນ ເພື່ອຢັ້ງຢືນວ່າ ບໍ່ມີສຳນວນຄະດີ ກ່ຽວກັບ ບໍລິສັດກວດສອບ ດັ່ງກ່າວຢູ່ສານປະຊາຊົນ;
4. ບົດລາຍງານການດຳເນີນທຸລະກິດ ແລະ ເອກະສານລາຍງານການເງິນ 1 ປີ ຄືນຫຼັງ ກ່ອນປີຍື່ນເອກະສານປະກອບການຂໍການຮັບຮອງຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ. ເອກະສານລາຍງານການເງິນດັ່ງກ່າວ ຕ້ອງຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍການບັນຊີ;
5. ສຳເນົາສັນຍາປະກັນໄພ ພ້ອມດ້ວຍນະໂຍບາຍການປະກັນໄພດ້ານວິຊາຊີບ;
6. ແຜນການກ່ຽວກັບການດຳເນີນທຸລະກິດຂອງຕົນ 3 ປີ ຕໍ່ໜ້າ ນັບແຕ່ປີຍື່ນເອກະສານປະກອບການຂໍຮັບຮອງ ເປັນຕົ້ນໄປ;
7. ສຳເນົາສັນຍາຮ່ວມມືກັບ ຜູ້ຮຸ້ນສ່ວນບໍລິຫານ ພ້ອມທັງ ຊີວະປະຫວັດຫຍໍ້ຂອງ ຜູ້ຮຸ້ນສ່ວນບໍລິຫານ;
8. ບັນຊີລາຍຊື່ ພະນັກງານດ້ານການບັນຊີ ແລະ ພະນັກງານກວດສອບ ພ້ອມດ້ວຍຊີວະປະຫວັດຫຍໍ້;
9. ເອກະສານອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ສຳລັບ ເອກະສານປະກອບການຂໍຮັບຮອງເປັນ ບໍລິສັດກວດສອບ ເພື່ອໃຫ້ບໍລິການກວດສອບແກ່ ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນ ແລະ ຮຸ້ນກູ້, ບໍລິສັດອອກຈຳໜ່າຍຮຸ້ນ ແລະ ຮຸ້ນກູ້ ໃນ ກະດານຊື້ ຂາຍ ຮຸ້ນວິສາຫະກິດ ຂະໜາດນ້ອຍ ແລະ ກາງ ແມ່ນໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນ ວັກໜຶ່ງ ຂໍ້ 1, 2,

3, 4, 8 ແລະ ຂໍ້ 9 ຂອງມາດຕານີ້. ນອກຈາກ ນັ້ນ, ຍັງຕ້ອງມີເອກະສານເພີ່ມເຕີມຄື: ແຜນການກ່ຽວກັບການ ດຳເນີນທຸລະກິດຂອງຕົນ 1 ປີ ຕໍ່ໜ້າ ນັບແຕ່ປີຍື່ນເອກະສານປະກອບການຂໍຮັບຮອງ ເປັນຕົ້ນໄປ.

**ມາດຕາ 8 ການພິຈາລະນາການຮັບຮອງເປັນບໍລິສັດກວດສອບ**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕ້ອງພິຈາລະນາ ເອກະສານປະກອບການຂໍຮັບຮອງເປັນບໍລິສັດກວດສອບ ພາຍໃນເວລາ 30 ວັນ ນັບແຕ່ວັນໄດ້ຮັບເອກະສານປະກອບ ຢ່າງຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ. ໃນກໍລະນີປະຕິເສດ ກໍໃຫ້ແຈ້ງຕອບເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ.

ໃນເວລາພິຈາລະນາຫາກເຫັນວ່າມີຄວາມຈຳເປັນ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ມີສິດທວງເອົາ ເອກະສານ ແລະ ຂໍ້ມູນເພີ່ມເຕີມ ຫຼື ເຊີນຜູ້ທີ່ກ່ຽວຂ້ອງມາຊີ້ແຈງ ຫຼື ໃຫ້ຂໍ້ມູນ.

ພາຍຫຼັງໄດ້ຮັບໃບຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບແລ້ວ ຕ້ອງປະກາດຕໍ່ມວນຊົນ ຜ່ານພາຫະນະສື່ມວນຊົນ ພາຍໃນເວລາ 5 ວັນ ລັດຖະການ ນັບແຕ່ວັນທີ່ໄດ້ຮັບໃບຮັບຮອງ ເປັນຕົ້ນໄປ.

**ມາດຕາ 9 (ປັບປຸງ) ເງື່ອນໄຂການຮັບຮອງເປັນນັກກວດສອບ**

ນັກກວດສອບ ທີ່ມີຈຸດປະສົງຂໍການຮັບຮອງເຄື່ອນໄຫວໃຫ້ການບໍລິການກວດສອບໃນຂົງເຂດວຽກງານຫຼັກຊັບ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນສະມາຊິກ ຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ;
2. ມີປະສົບການດ້ານການກວດສອບ ຢ່າງໜ້ອຍ 3 ປີ ຂຶ້ນໄປ;
3. ບໍ່ເຄີຍລະເມີດ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ກ່ຽວກັບການກວດສອບ ແລະ ກົດຈັນຍາບັນທາງດ້ານວິຊາຊີບບັນຊີ ແລະ ກວດສອບ;
4. ບໍ່ຖືກດຳເນີນຄະດີ ຫຼື ຖືກສານຕັດສິນລົງໂທດທາງອາຍາ ເປັນຕົ້ນ ການກະທຳຜິດ ໃນສະຖາບັນການສໍ້ໂກງຊັບ, ການຍັກຍອກຊັບ ຫຼື ກະທຳຜິດທາງດ້ານການເງິນ;
5. ບໍ່ແມ່ນ ລັດຖະກອນ, ທະຫານ, ຕຳຫຼວດ, ພະນັກງານລັດວິສາຫະກິດ, ພະນັກງານຕາມສັນຍາທີ່ກ່ຽວຂ້ອງກັບພາກລັດ ດຳເນີນທຸລະກິດດ້ານການບັນຊີ ແລະ ການກວດສອບໃນຂົງເຂດວຽກງານຫຼັກຊັບ;
6. ຕ້ອງເປັນພະນັກງານວິຊາການທີ່ເຮັດວຽກປະຈຳຢູ່ ບໍລິສັດກວດສອບ ແລະ ມີປະສົບການ ດ້ານການບັນຊີ ແລະ ການກວດສອບຕົວຈິງ ຢ່າງໜ້ອຍ 3 ປີຂຶ້ນໄປ;
7. ມີຄວາມຮູ້ ແລະ ຄວາມເຂົ້າໃຈ ກ່ຽວກັບການນຳໃຊ້ ມາດຕະຖານສາກົນດ້ານການບັນຊີ ແລະ ການກວດສອບ ແລະ ມາດຕະການສາກົນດ້ານການລາຍງານການເງິນ;
8. ມີໃບຢັ້ງຢືນເປັນນັກຊ່ຽວຊານບັນຊີ ແລະ/ຫຼື ມີໃບອະນຸຍາດເປັນນັກກວດສອບຕາມກົດໝາຍທີ່ຍັງບໍ່ທັນໝົດອາຍຸ ແລະ ບໍ່ຢູ່ໃນໄລຍະການໂຈະ ຫຼື ການຖອນໃບອະນຸຍາດດັ່ງກ່າວ;
9. ເງື່ອນໄຂອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 10 (ປັບປຸງ) ເອກະສານປະກອບການຮັບຮອງເປັນນັກກວດສອບ**

ເອກະສານປະກອບການຮັບຮອງເປັນນັກກວດສອບ ມີດັ່ງນີ້:

1. ຄຳຮ້ອງຕາມແບບພິມຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
2. ສຳເນົາ ໃບຢັ້ງຢືນເປັນນັກຊ່ຽວຊານບັນຊີ ແລະ/ຫຼື ໃບອະນຸຍາດເປັນນັກກວດສອບຕາມກົດໝາຍຈາກ ກະຊວງການເງິນ;

3. ສຳເນົາໃບປະກາສະນີຍະບັດດ້ານການບັນຊີ ແລະ ດ້ານອື່ນທີ່ກ່ຽວຂ້ອງ ເປັນຕົ້ນ: ການເງິນ, ການທະນາຄານ, ການບໍລິຫານທຸລະກິດ, ເສດຖະສາດ, ການຕະຫຼາດ, ສະຖິຕິ, ການສື່ສານທາງດ້ານການດຳເນີນທຸລະກິດ, ລະບົບຈັດການຂໍ້ມູນ-ຂ່າວສານ, ກົດຈັນຍາບັນ ແລະ ກົດໝາຍ (ຖ້າມີ);

4. ສຳເນົາໃບຢັ້ງຢືນການເຂົ້າຮ່ວມຝຶກອົບຮົມ ກ່ຽວກັບວຽກງານບັນຊີ ແລະ ກວດສອບ ຈາກພາກສ່ວນອື່ນທີ່ກ່ຽວຂ້ອງ;

5. ໃບແຈ້ງໂທດຈາກສານປະຊາຊົນນະຄອນຫຼວງວຽງຈັນ ບໍ່ໃຫ້ກາຍ 3 ເດືອນ ຂອງນັກກວດສອບພາຍໃນ ແລະ ໃບແຈ້ງໂທດຈາກສານປະຊາຊົນ ສຳລັບ ນັກກວດສອບຕ່າງປະເທດ;

6. ຢັ້ງຢືນທີ່ຢູ່ປັດຈຸບັນ ຫຼື ໜັງສືຜ່ານແດນ;

7. ຊີວະປະຫວັດຫຍໍ້ຂອງ ນັກກວດສອບ ທີ່ຂໍການຮັບຮອງ;

8. ເອກະສານອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 11 ການພິຈາລະນາການຮັບຮອງເປັນນັກກວດສອບ**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕ້ອງພິຈາລະນາ ເອກະສານປະກອບການຮັບຮອງເປັນນັກກວດສອບ ພາຍໃນເວລາ 30 ວັນ ນັບແຕ່ວັນໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບ ຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ. ກໍລະນີປະຕິເສດ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕ້ອງແຈ້ງຕອບເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ.

ໃນເວລາພິຈາລະນາຫາກເຫັນວ່າມີຄວາມຈຳເປັນ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ມີສິດທວງເອົາ ເອກະສານ ແລະ ຂໍ້ມູນເພີ່ມເຕີມ ຫຼື ເຊີນຜູ້ທີ່ກ່ຽວຂ້ອງມາຊີ້ແຈງ ຫຼື ໃຫ້ຂໍ້ມູນ.

## ໝວດທີ 3
## ຂອບເຂດການໃຫ້ບໍລິການ, ອາຍຸການຮັບຮອງ, ການຕໍ່ອາຍຸການຮັບຮອງ ແລະ ກຳນົດເວລາການໃຫ້ບໍລິການຂອງບໍລິສັດກວດສອບ ແລະ ນັກກວດສອບ

**ມາດຕາ 12 ຂອບເຂດການໃຫ້ບໍລິການກວດສອບ**

ຂອບເຂດການໃຫ້ບໍລິການກວດສອບ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 95. ນອກຈາກນັ້ນ ຍັງສາມາດໃຫ້ບໍລິການກວດສອບເພີ່ມເຕີມ ດັ່ງນີ້:

1. ກວດສອບການຜະລິດ ຫຼື ການບໍລິການຂອງ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ;

2. ກວດສອບການຈັດຕັ້ງປະຕິບັດຕາມ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ.

**ມາດຕາ 13 (ປັບປຸງ) ອາຍຸການຮັບຮອງເປັນບໍລິສັດກວດສອບ ແລະ ນັກກວດສອບ**

ໃບຮັບຮອງບໍລິສັດກວດສອບ ແລະ ນັກກວດສອບ ມີອາຍຸການ 3 ປີ. ນັບແຕ່ວັນທີ່ໄດ້ຮັບການຮັບຮອງ ເປັນຕົ້ນໄປ.

**ມາດຕາ 14 ການຕໍ່ອາຍຸການຮັບຮອງບໍລິສັດກວດສອບ ແລະ ນັກກວດສອບ**

ບໍລິສັດກວດສອບ ແລະ ນັກກວດສອບ ທີ່ມີຈຸດປະສົງສືບຕໍ່ອາຍຸເຄື່ອນໄຫວໃຫ້ການບໍລິການຢູ່ໃນຂົງເຂດວຽກງານຫຼັກຊັບ ຕ້ອງມີເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 6, ມາດຕາ 9 ແລະ ປະກອບ

ເອ ກະສານຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 7, ມາດຕາ 10 ຂອງຂໍ້ຕົກລົງສະບັບນີ້ ເພື່ອຍື່ນຕໍ່ ສຳນັກງານ ຄະ ນະກຳມະການຄຸ້ມຄອງຫຼັກຊັບ ພິຈາລະນາ ຢ່າງໜ້ອຍ 45 ວັນ ກ່ອນວັນໝົດອາຍຸການຮັບຮອງ.

ກໍລະນີ ບໍລິສັດກວດສອບ ແລະ ນັກກວດສອບ ບໍ່ຍື່ນເອກະສານປະກອບຂໍຕໍ່ອາຍຸໃບຮັບຮອງ ພາຍໃນເວລາດັ່ງກ່າວ ແມ່ນຈະຖືກຖອນໃບຮັບຮອງ.

ກໍລະນີ ບໍລິສັດກວດສອບ ແລະ ນັກກວດສອບ ທີ່ຖືກຖອນໃບຮັບຮອງ ຫາກມີຈຸດປະສົງສືບຕໍ່ເຄື່ອນໄຫວໃຫ້ການບໍລິການຢູ່ໃນຂົງເຂດວຽກງານຫຼັກຊັບຕື່ມອີກ ແມ່ນຕ້ອງຜ່ານການຮັບຮອງຄືນໃໝ່.

**ມາດຕາ 15 ກຳນົດເວລາການໃຫ້ການບໍລິການກວດສອບຕໍ່ກັບ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ**

ບໍລິສັດກວດສອບ ທີ່ໃຫ້ການບໍລິການດ້ານການກວດສອບ ຕໍ່ກັບ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ໃດໜຶ່ງ ແມ່ນມີກຳນົດເວລາການໃຫ້ບໍລິການກວດສອບ 5 ປີການບັນຊີຕໍ່ເນື່ອງ ແລະ ສາມາດຕໍ່ກຳນົດເວລາໃຫ້ບໍລິການກວດສອບ ຕໍ່ກັບ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບເດີມ ໄດ້ຕື່ມອີກ ເປັນກຳນົດເວລາ 5 ປີການບັນຊີຕໍ່ເນື່ອງ ແຕ່ຕ້ອງໃຫ້ມີການສັບປ່ຽນນັກກວດສອບຕາມກົດໝາຍ ຜູ້ໃໝ່.

ບໍລິສັດກວດສອບ ທີ່ໄດ້ໃຫ້ການບໍລິການດ້ານການກວດສອບ ຕໍ່ກັບ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ໃດໜຶ່ງ ຄົບກຳນົດເວລາ 10 ປີການບັນຊີຕໍ່ເນື່ອງແລ້ວ ແມ່ນບໍ່ອະນຸຍາດໃຫ້ບໍລິການກວດສອບ ຕໍ່ກັບ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບເດີມ ເປັນເວລາ 1 ປີ ນັບແຕ່ວັນ ໄດ້ໃຫ້ການບໍລິການດ້ານການກວດສອບ ຄົບ 10 ປີການບັນຊີຕໍ່ເນື່ອງ ເປັນຕົ້ນໄປ.

ນັກກວດສອບຕາມກົດໝາຍ ທີ່ໄດ້ລົງລາຍເຊັນໃສ່ ບົດລາຍງານການກວດສອບ ຕໍ່ກັບ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ໃດໜຶ່ງ ເມື່ອຄົບກຳນົດເວລາ 5 ປີການບັນຊີຕໍ່ເນື່ອງແລ້ວ ຕ້ອງໄດ້ເວັ້ນວັກ 1 ປີ ແລ້ວ ຈຶ່ງສາມາດກັບມາລົງລາຍເຊັນໃສ່ ບົດລາຍງານການກວດສອບ ໃຫ້ແກ່ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບເດີມໄດ້, ຍົກເວັ້ນ ບໍລິສັດກວດສອບໃນກະດານ ຊື້ ຂາຍ ຮຸ້ນວິສາຫະກິດ ຂະໜາດນ້ອຍ ແລະ ກາງ ທີ່ມີນັກກວດສອບຕາມກົດໝາຍ 1 ຄົນ.

ສຳລັບ ໜ່ວຍງານກວດສອບ (Audit team) ທີ່ໄດ້ກວດສອບ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ໃດໜຶ່ງ ເມື່ອຄົບກຳນົດເວລາ 5 ປີການບັນຊີຕໍ່ເນື່ອງແລ້ວ ຕ້ອງໄດ້ເວັ້ນວັກ 1 ປີ ແລ້ວຈຶ່ງສາມາດກັບມາກວດສອບ ໃຫ້ແກ່ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ເດີມໄດ້.

## ໝວດທີ 4
## ສິດ ແລະ ໜ້າທີ່ຂອງ ບໍລິສັດກວດສອບ ແລະ ນັກກວດສອບ

**ມາດຕາ 16 (ປັບປຸງ) ສິດ ແລະ ໜ້າທີ່ຂອງບໍລິສັດກວດສອບ**

ບໍລິສັດກວດສອບ ມີສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 96. ນອກຈາກນັ້ນ ຍັງມີສິດ ແລະ ໜ້າທີ່ ເພີ່ມເຕີມ ດັ່ງນີ້:

1. ໃຫ້ການບໍລິການທາງດ້ານການບັນຊີ ແລະ ການກວດສອບ ຖືກຕ້ອງຕາມ ກົດໝາຍ, ລະບຽບການ ແລະ ກົດຈັນຍາບັນ;

2. ຮຽກເອົາຄ່າເສຍຫາຍໃນກໍລະນີ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ບໍ່ໃຫ້ຄວາມຮ່ວມມືໃນການກວດສອບ ຊຶ່ງເປັນສາເຫດກໍ່ໃຫ້ເກີດຄວາມເສຍຫາຍໃຫ້ແກ່ ບໍລິສັດກວດສອບ;

3. ພັດທະນານັກກວດສອບ ໃຫ້ມີຄວາມຮູ້ ແລະ ຄວາມເຂົ້າໃຈ ກ່ຽວກັບ ມາດຕະຖານການບັນຊີ ແລະ ການກວດສອບສາກົນ;

4. ປະຕິບັດຕາມກົດຈັນຍາບັນດ້ານການບັນຊີ ແລະ ການກວດສອບ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຢ່າງເຂັ້ມງວດ;

5. ລາຍງານຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊາບຢ່າງເປັນລາຍລັກອັກສອນ;

6. ນຳສົ່ງເອກະສານລາຍງານການເງິນ ທີ່ຜ່ານການຢັ້ງຢືນຄວາມຖືກຕ້ອງຈາກກະຊວງການເງິນໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

7. ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ແລະ ປະກອບຄຳເຫັນທີ່ໄດ້ຈາກການກວດສອບ ຫຼື ຕອບຄຳຖາມກ່ຽວກັບການກວດສອບໃນກອງປະຊຸມຜູ້ຖືຮຸ້ນ;

8. ແຈ້ງໃຫ້ໜ່ວຍງານກວດກາພາຍໃນ, ຄະນະກຳມະການກວດກາພາຍໃນ ແລະ ລາຍງານໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ຫາກພົບເຫັນການລະເມີດ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຫຼື ກົດລະບຽບຂອງ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ທີ່ກ່ຽວຂ້ອງກັບການດຳເນີນທຸລະກິດຂອງກຸ່ມເປົ້າໝາຍ ແລະພ້ອມດຽວກັນນັ້ນຕ້ອງລາຍງານໃຫ້ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊາບຢ່າງເປັນລາຍລັກອັກສອນ ພາຍໃນເວລາ 7 ວັນ ລັດຖະການ ນັບແຕ່ວັນທີພົບເຫັນການລະເມີດ ເປັນຕົ້ນໄປ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການກຳນົດຂອງກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ບໍລິສັດກວດສອບ ທີ່ໄດ້ຮັບການຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເພື່ອໃຫ້ການບໍລິການທາງດ້ານການບັນຊີ ແລະ ການກວດສອບ ໃນ ກະດານຊື້ ຂາຍຫຼັກຊັບຕະຫຼາດຫຼັກຊັບລາວ ສາມາດເຄື່ອນໄຫວໃຫ້ການບໍລິການດັ່ງກ່າວໃນ ກະດານຊື້ ຂາຍ ຮຸ້ນວິສາຫະກິດ ຂະໜາດນ້ອຍ ແລະ ກາງ.

**ມາດຕາ 17 (ປັບປຸງ) ສິດ ແລະ ໜ້າທີ່ຂອງນັກກວດສອບ**

ນັກກວດສອບ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໃຫ້ການບໍລິການດ້ານການກວດສອບ ແກ່ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ໃຫ້ຖືກຕ້ອງຕາມກົດໝາຍ, ລະບຽບການ ແລະ ກົດຈັນຍາບັນ;

2. ເຂົ້າຮ່ວມຝຶກອົບຮົມ ແລະ ສອບເສັງພາກກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງໃນຂົງເຂດວຽກງານຫຼັກຊັບ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ວາງອອກແຕ່ລະໄລຍະ;

3. ໃຫ້ຄວາມຮ່ວມມືກັບ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການກຳນົດຂອງກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 5
## ການລາຍງານ ແລະ ການເກັບຮັກສາຂໍ້ມູນ

**ມາດຕາ 18 ຮູບແບບການລາຍງານຂອງບໍລິສັດກວດສອບ**

ບໍລິສັດກວດສອບ ຕ້ອງປະຕິບັດການລາຍງານຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ດັ່ງນີ້:

1. ການລາຍງານປົກກະຕິ;
2. ການລາຍງານທັນດ່ວນ;
3. ລາຍງານຕາມການຮຽກຮ້ອງ;
4. ລາຍງານດ້ວຍຄວາມສະໝັກໃຈ.

**ມາດຕາ 19 (ປັບປຸງ) ການລາຍງານປົກກະຕິຂອງບໍລິສັດກວດສອບ**

ບໍລິສັດກວດສອບ ຕ້ອງລາຍງານປະຈໍາປີຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ພາຍໃນເວລາ 90 ວັນ ພາຍຫຼັງສິ້ນສຸດ ປີການບັນຊີ. ການລາຍງານປະຈໍາປີ ປະກອບດ້ວຍເນື້ອໃນ ດັ່ງນີ້:

1. ບົດສະຫຼຸບການດໍາເນີນທຸລະກິດປະຈໍາປີຂອງ ບໍລິສັດກວດສອບ ຕາມແບບພິມຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ;

2. ສໍາເນົາເອກະສານລາຍງານການເງິນ ສະບັບນໍາສົ່ງໃຫ້ກະຊວງການເງິນ;

3. ບົດລາຍງານການຍົກລະດັບການສຶກສາດ້ານວິຊາຊີບໃຫ້ພະນັກງານໃນ ບໍລິສັດກວດສອບ ຂອງຕົນ;

4. ບົດລາຍງານຄວາມໂປ່ງໃສ;

5. ເນື້ອໃນອື່ນ ຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

ຖ້າວ່າ ບໍລິສັດກວດສອບ ຫາກເປັນກຸ່ມບໍລິສັດ ເອກະສານລາຍງານການເງິນ ຕ້ອງໃຫ້ມີ ແບບແຍກກິດຈະການ ແລະ ແບບລວມກິດຈະການ.

**ມາດຕາ 20 ການລາຍງານທັນດ່ວນຂອງບໍລິສັດກວດສອບ ແລະ ນັກກວດສອບ**

ບໍລິສັດ ແລະ ນັກກວດສອບ ຕ້ອງລາຍງານຂໍ້ມູນທັນທີໃຫ້ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ນັບແຕ່ເວລາມີເຫດການໃດໜຶ່ງເກີດຂຶ້ນ ດັ່ງນີ້:

1. ໃນເວລາປະຕິບັດໜ້າທີ່ຂອງ ນັກກວດສອບ ພົບເຫັນການລະເມີດລະບຽບການ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຫຼື ກົດລະບຽບຂອງບໍລິສັດທີ່ຖືກກວດສອບ ແລະ ກ່ຽວຂ້ອງກັບການດໍາເນີນທຸລະກິດຂອງ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ;

2. ໃນການທົບທວນ ຫຼື ກວດສອບ, ຖ້ານັກກວດສອບພົບວ່າ ບໍລິສັດທີ່ຕົນເອງກວດສອບ ໄດ້ສ້າງເອກະສານລາຍງານການເງິນ ປະຈໍາໄຕມາດ, ປະຈໍາ 6 ເດືອນ, ປະຈໍາປີ ຫຼື ຮອບປີການບັນຊີໃດໜຶ່ງ ທີ່ບໍ່ຖືກຕ້ອງ ເຊັ່ນ:

2.1 ການສໍ້ໂກງ ແລະ ຂໍ້ຜິດພາດ ທີ່ກະທົບຕໍ່ການຕັດສິນໃຈຂອງ ນັກລົງທຶນໃນຫຼັກຊັບ ແລະ ຜູ້ທີ່ກ່ຽວຂ້ອງ;

2.2 ຄວາມເສຍຫາຍ ຫຼື ຄວາມເສຍຫາຍທີ່ອາດຈະເກີດຂຶ້ນ ທີ່ມີມູນຄ່າແຕ່ ຫ້າສ່ວນຮ້ອຍ (5%) ຂອງມູນຄ່າຊັບສິນຂອງບໍລິສັດອອກຫຼັກຊັບ;

2.3 ການປ່ຽນແປງຂອງຊັບສິນ ຫາກເຫັນວ່າຜິດປົກກະຕິ;

2.4 ມູນຄ່າຊັບສິນຂອງບໍລິສັດອອກຫຼັກຊັບ ບໍ່ພໍທີ່ຈະຮັບປະກັນການຊໍາລະໜີ້ໃຫ້ແກ່ເຈົ້າໜີ້;

2.5 ການດ້ອຍຄ່າຂອງທຶນຈົດທະບຽນ.

3 ບໍລິສັດ ເຮັດສັນຍາທົບທວນ ຫຼື ກວດສອບ ກັບ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ;

4 ບໍລິສັດ ແລະ ນັກກວດສອບ ຍົກເລີກ ຫຼື ຖືກຍົກເລີກສັນຍາກວດສອບ ກັບ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ;

5 ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ບໍ່ໃຫ້ຄວາມຮ່ວມມືໃນການສະໜອງຂໍ້ມູນເຂົ້າໃນການກວດສອບຕໍ່ ກັບບັນຫາທີ່ຕິດພັນກັບເນື້ອໃນຂອງ ການກວດສອບ ແລະ ບໍ່ໃຫ້ຄວາມຮ່ວມມືດ້ານອື່ນໃນການກວດສອບ;

6 ການປ່ຽນແປງຊື່, ທີ່ຕັ້ງຂອງບໍລິສັດ, ໂຄງປະກອບການຈັດຕັ້ງ, ຈໍານວນ ຜູ້ຮຸ້ນສ່ວນບໍລິຫານ, ຜູ້ຮຸ້ນສ່ວນຮັບຜິດຊອບງານ, ຈໍານວນຜູ້ບໍລິຫານ, ຜູ້ຖືຮຸ້ນ, ນັກກວດສອບ, ນັກຊ່ຽວຊານບັນຊີ, ພະນັກງານ

ການເຄື່ອນໄຫວທຸລະກິດ, ທຶນຈົດທະບຽນ, ແຜນການຕະຫຼາດ ແລະ ກົດລະບຽບພາຍໃນຂອງບໍລິສັດ ພາຍໃນເວລາ 5 ວັນ ລັດຖະການ ນັບແຕ່ວັນທີ່ ມີການປ່ຽນແປງ ເປັນຕົ້ນໄປ;

7 ລາຍງານ ກ່ຽວກັບສະພາບ ແລະ ຜົນການກວດສອບ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ທຸກຄັ້ງ ຕາມການຮຽກຮ້ອງຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ;

8 ບໍລິສັດ ແລະ ນັກກວດສອບ ສິ້ນສຸດການໃຫ້ບໍລິການດ້ານການບັນຊີ ແລະ ກວດສອບໃນຂົງເຂດຫຼັກຊັບ;

9 ກໍລະນີອື່ນ ຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

### ມາດຕາ 21 ການລາຍງານຕາມການຮຽກຮ້ອງ

ການລາຍງານ ຕາມການຮຽກຮ້ອງ ແມ່ນ ການລາຍງານຂອງ ບໍລິສັດກວດສອບ ຕາມການຮຽກຮ້ອງຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

ບໍລິສັດກວດສອບ ຕ້ອງລາຍງານ ຕາມການຮຽກຮ້ອງຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ໃນກໍລະນີມີເຫດການໃດໜຶ່ງເກີດຂຶ້ນທີ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ເຫັນວ່າ ທີ່ສົ່ງ ຫຼື ອາດສົ່ງ ຜົນກະທົບຕໍ່ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ, ສິດ ແລະ ຜົນປະໂຫຍດຂອງຜູ້ລົງທຶນ.

### ມາດຕາ 22 ການລາຍງານດ້ວຍຄວາມສະໝັກໃຈ

ການລາຍງານ ດ້ວຍຄວາມສະໝັກໃຈ ແມ່ນ ການລາຍງານ ຂອງບໍລິສັດກວດສອບ ທີ່ຕ້ອງການໃຫ້ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຮັບຮູ້ຂໍ້ມູນເພີ່ມເຕີມ ກ່ຽວກັບການໃຫ້ການບໍລິການທາງດ້ານການບັນຊີ ແລະ ການກວດສອບ.

### ມາດຕາ 23 ການເກັບຮັກສາຂໍ້ມູນ

ບໍລິສັດກວດສອບ, ນັກກວດສອບ ແລະ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ຕ້ອງເກັບຮັກສາຂໍ້ມູນທີ່ກ່ຽວຂ້ອງກັບການໃຫ້ການບໍລິການຂອງຕົນ ຢ່າງໜ້ອຍ 10 ປີ ນັບແຕ່ສິ້ນສຸດການເຄື່ອນໄຫວໃຫ້ການບໍລິການຂອງຕົນ.

## ໝວດທີ 6
## ການໂຈະການໃຫ້ບໍລິການກວດສອບ ແລະ ການຖອນໃບຮັບຮອງ ເປັນບໍລິສັດກວດສອບ ແລະ ນັກກວດສອບ

### ມາດຕາ 24 (ປັບປຸງ) ການໂຈະການໃຫ້ບໍລິການກວດສອບຂອງບໍລິສັດກວດສອບ

ບໍລິສັດກວດສອບ ຈະຖືກໂຈະການໃຫ້ບໍລິການຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 97. ນອກຈາກນັ້ນ ຍັງຈະຖືກໂຈະເພີ່ມເຕີມ ໃນກໍລະນີໃດໜຶ່ງ ຫຼື ທັງໝົດ ດັ່ງນີ້:

1. ອະນຸຍາດໃຫ້ ນັກກວດສອບ ທີ່ບໍ່ໄດ້ຮັບການຮັບຮອງຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ມາດໍາເນີນການໃຫ້ການບໍລິການດ້ານການບັນຊີ ແລະ ການກວດສອບ ໃຫ້ແກ່ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ;
2. ມີການປັບປຸງ, ປ່ຽນແປງ ຂໍ້ມູນເພີ່ມເຕີມໃນເອກະສານລາຍງານການເງິນຂອງ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ທີ່ໄດ້ກວດສອບໃນປີຜ່ານມາ ໂດຍບໍ່ຖືກຕ້ອງຕາມຄວາມເປັນຈິງ;
3. ມີຈໍານວນ ນັກກວດສອບ ຫຼຸດລົງຕໍ່າກວ່າ 5 ຄົນ;

4. ລະເມີດຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ຕົກລົງສະບັບນີ້;

5. ໂຈະໃນກໍລະນີອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ສຳລັບ ການໂຈະການໃຫ້ບໍລິການກວດສອບຂອງ ບໍລິສັດກວດສອບ ທີ່ກວດສອບໃນ ກະດານຊື້ ຂາຍຮຸ້ນວິສາຫະກິດ ຂະໜາດນ້ອຍ ແລະ ກາງ ແມ່ນໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນ ວັກໜຶ່ງ ຂໍ້ 1, 2, 3, 4 ແລະ ຂໍ້ 5 ຂອງມາດຕານີ້. ນອກຈາກນັ້ນ, ຍັງຈະຖືກໂຈະເພີ່ມເຕີມຄື: ມີຈຳນວນນັກກວດສອບຫຼຸດລົງຕໍ່າກວ່າ 2 ຄົນ.

ພາຍຫຼັງຖືກສັ່ງໂຈະການໃຫ້ບໍລິການ ບໍລິສັດກວດສອບ ຕ້ອງປັບປຸງແກ້ໄຂຂໍ້ຜິດພາດ ໃຫ້ສຳເລັດຕາມກຳນົດເວລາທີ່ໄດ້ກຳນົດໄວ້ໃນແຈ້ງການຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 25 ການຖອນໃບຮັບຮອງເປັນບໍລິສັດກວດສອບ**

ບໍລິສັດກວດສອບ ຈະຖືກຖອນໃບຮັບຮອງຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 97. ນອກຈາກນັ້ນ, ຍັງຈະຖືກຖອນໃບຮັບຮອງເພີ່ມເຕີມ ໃນກໍລະນີໃດໜຶ່ງ ຫຼື ທັງໝົດ ດັ່ງນີ້:

1. ບໍລິສັດກວດສອບ ຖືກຍຸບເລີກ ຫຼື ລົ້ມລະລາຍ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ;
2. ຖືກຖອນໃບອະນຸຍາດດຳເນີນທຸລະກິດຈາກ ກະຊວງການເງິນ;
3. ບໍລິສັດກວດສອບ ຂໍຖອນໃບຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ດ້ວຍຄວາມສະໝັກໃຈ;
4. ບໍ່ສາມາດແກ້ໄຂສາເຫດຂອງການໂຈະຕາມທີ່ກຳນົດໄວ້ໃນ ມາດຕາ 24 ຂອງຂໍ້ຕົກລົງສະບັບນີ້;
5. ຖືກກ່າວເຕືອນຢ່າງເປັນລາຍລັກອັກສອນແລ້ວ ແຕ່ຍັງສືບຕໍ່ລະເມີດ;
6. ຖອນໃນກໍລະນີອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 26 (ປັບປຸງ) ການໂຈະໃບຮັບຮອງເປັນນັກກວດສອບ**

ນັກກວດສອບ ຈະຖືກໂຈະໃບຮັບຮອງ ໃນກໍລະນີໃດໜຶ່ງ ຫຼື ທັງໝົດ ດັ່ງນີ້:

1. ໄດ້ຮັບການຮັບຮອງບົນພື້ນຖານການສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ;
2. ບໍ່ໄດ້ເຂົ້າຮ່ວມການຍົກລະດັບດ້ານວິຊາຊີບແບບຕໍ່ເນື່ອງ ຢ່າງໜ້ອຍ 120 ຊົ່ວໂມງພາຍໃນເວລາ 3 ປີ ແລະ ໃນແຕ່ລະປີ ບໍ່ໃຫ້ຫຼຸດ 20 ຊົ່ວໂມງ, ໃນນັ້ນປະກອບດ້ວຍກົດຈັນຍາບັນ ບໍ່ໃຫ້ຫຼຸດ 4 ຊົ່ວໂມງ;
3. ນັກກວດສອບ ຂອງບໍລິສັດດັ່ງກ່າວ ບໍ່ມີຄວາມເປັນອິດສະລະໃນການໃຫ້ການບໍລິການດ້ານການບັນຊີ ແລະ ການກວດສອບ;
4. ລະເມີດຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 29 ຂອງຂໍ້ຕົກລົງສະບັບນີ້;
5. ໂຈະໃນກໍລະນີອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ພາຍຫຼັງຖືກສັ່ງໂຈະໃບຮັບຮອງ ນັກກວດສອບ ຕ້ອງປັບປຸງແກ້ໄຂຂໍ້ຜິດພາດໃຫ້ສຳເລັດຕາມກຳນົດເວລາໃນແຈ້ງການຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ກຳນົດໄວ້.

**ມາດຕາ 27 ການຖອນໃບຮັບຮອງເປັນນັກກວດສອບ**

ນັກກວດສອບ ຈະຖືກຖອນໃບຮັບຮອງ ໃນກໍລະນີໃດໜຶ່ງ ຫຼື ທັງໝົດ ດັ່ງນີ້:

1. ຂາດຄວາມສາມາດດ້ານການປະພຶດ, ເສຍຊີວິດ, ຖືກດຳເນີນຄະດີ, ຖືກປົດອອກ, ຖືກຍ້າຍອອກຈາກ ບໍລິສັດກວດສອບ ໜຶ່ງ ໄປສັງກັດຢູ່ອີກ ບໍລິສັດກວດສອບ ໜຶ່ງ ຫຼື ຫົວໜ່ວຍທຸລະກິດອື່ນ, ຖືກປະຕິບັດວິໄນຂັ້ນຮ້າຍແຮງ ຫຼື ມີການລະເມີດລະບຽບກົດໝາຍອື່ນທີ່ກ່ຽວ;

2. ຖືກຖອນໃບຢັ້ງຢືນເປັນນັກຊ່ຽວຊານບັນຊີ ຫຼື ໃບອະນຸຍາດເປັນນັກກວດສອບຕາມກົດໝາຍຈາກ ກະຊວງການເງິນ;

3. ນັກກວດສອບ ຂໍຖອນໃບຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ດ້ວຍຄວາມສະໝັກໃຈ;

4. ບໍ່ຕໍ່ອາຍຸໃບຮັບຮອງ ເປັນນັກກວດສອບ;

5. ບໍ່ສາມາດແກ້ໄຂສາເຫດຂອງການສັ່ງໂຈະຕາມທີ່ກຳນົດໄວ້ໃນ ມາດຕາ 24 ຂອງຂໍ້ຕົກລົງສະບັບນີ້;

6. ຖືກກ່າວເຕືອນຢ່າງເປັນລາຍລັກອັກສອນແລ້ວ ແຕ່ຍັງສືບຕໍ່ລະເມີດ;

7. ຖອນໃນກໍລະນີອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

## ໝວດທີ 7
## ຄ່າບໍລິການ ແລະ ຂໍ້ຫ້າມ

**ມາດຕາ 28 (ປັບປຸງ) ຄ່າບໍລິການ**

ບໍລິສັດກວດສອບ ແລະ ນັກກວດສອບ ທີ່ເຄື່ອນໄຫວໃຫ້ການບໍລິການດ້ານການກວດສອບ ຢູ່ໃນກະດານຊື້ ຂາຍຫຼັກຊັບຕະຫຼາດຫຼັກຊັບລາວ ຕ້ອງເສຍຄ່າບໍລິການໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ດັ່ງນີ້:

1. ຄ່າອອກ ແລະ ຄ່າຕໍ່ ໃບຮັບຮອງເປັນ ບໍລິສັດກວດສອບ ແລະ ນັກກວດສອບ 5 ຄົນ ຈຳນວນ 21.000.000 ກີບ ຕໍ່ຄັ້ງ ແລະ ຕ້ອງຊຳລະເງິນພາຍໃນວັນທີ່ໄດ້ຮັບໃບຮັບຮອງ. ກໍລະນີບໍລິສັດກວດສອບໃດຕ້ອງການສະເໜີຂໍຮັບຮອງນັກກວດສອບເພີ່ມເຕີມ ເກີນ 5 ຄົນ ຂຶ້ນໄປ ຕ້ອງໄດ້ເສຍ ຄ່າອອກ ແລະ ຄ່າຕໍ່ໃບຮັບຮອງ ຈຳນວນ 3.000.000 ກີບ ຕໍ່ຄົນ.

2. ຄ່າຄຸ້ມຄອງປະຈຳປີ ສຳລັບ ບໍລິສັດກວດສອບ ແລະ ນັກກວດສອບ ຈຳນວນ 12.000.000 ກີບ ຕໍ່ປີ ແລະ ຕ້ອງຊຳລະເງິນພາຍໃນ ໄຕມາດ 1 ຂອງປີຖັດໄປ. ກໍລະນີບໍລິສັດກວດສອບໃດມີນັກກວດສອບ ເກີນ 5 ຄົນ ຂຶ້ນໄປ ສ່ວນທີ່ເກີນນັ້ນຕ້ອງໄດ້ເສຍຄ່າຄຸ້ມຄອງປະຈຳປີ ຈຳນວນ 1.800.000 ກີບ ຕໍ່ຄົນ.

ສຳລັບ ບໍລິສັດກວດສອບ ແລະ ນັກກວດສອບ ທີ່ເຄື່ອນໄຫວໃຫ້ການບໍລິການດ້ານການກວດສອບຢູ່ໃນ ກະດານຊື້ ຂາຍ ຮຸ້ນວິສາຫະກິດ ຂະໜາດນ້ອຍ ແລະ ກາງ ຕ້ອງເສຍຄ່າບໍລິການໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ດັ່ງນີ້:

1. ຄ່າອອກ ແລະ ຄ່າຕໍ່ ໃບຮັບຮອງ ບໍລິສັດກວດສອບ ແລະ ນັກກວດສອບ ຈຳນວນ 12.000.000 ກີບ ຕໍ່ຄັ້ງ ແລະ ຕ້ອງຊຳລະເງິນພາຍໃນເວັນທີ່ໄດ້ຮັບໃບຮັບຮອງ. ກໍລະນີບໍລິສັດກວດສອບໃດຕ້ອງການສະເໜີຂໍຮັບຮອງນັກກວດສອບເພີ່ມເຕີມ ເກີນ 2 ຄົນ ຂຶ້ນໄປ ຕ້ອງໄດ້ເສຍ ຄ່າອອກ ແລະ ຄ່າຕໍ່ໃບຮັບຮອງ ຈຳນວນ 3.000.000 ກີບ ຕໍ່ຄົນ.

2. ຄ່າຄຸ້ມຄອງປະຈຳປີ ສຳລັບ ບໍລິສັດກວດສອບ ແລະ ນັກກວດສອບ ຈຳນວນ 6.600.000 ກີບ ຕໍ່ປີ ແລະ ຕ້ອງຊຳລະເງິນພາຍໃນ ໄຕມາດ 1 ຂອງປີຖັດໄປ. ກໍລະນີບໍລິສັດກວດສອບໃດມີນັກກວດສອບ ເກີນ 2 ຄົນ ຂຶ້ນໄປ ສ່ວນທີ່ເກີນນັ້ນ ຕ້ອງໄດ້ເສຍຄ່າຄຸ້ມຄອງປະຈຳປີ ຈຳນວນ 1.800.000 ກີບ ຕໍ່ຄົນ.

ກໍລະນີ ບໍລິສັດກວດສອບ ຫາກບໍ່ໄດ້ ໃຫ້ການບໍລິການກວດສອບ ແກ່ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ພາຍໃນປີນັ້ນ ແມ່ນຈະບໍ່ໄດ້ເສຍຄ່າຄຸ້ມຄອງປະຈໍາປີ.

**ມາດຕາ 29 (ປັບປຸງ) ຂໍ້ຫ້າມສໍາລັບ ບໍລິສັດກວດສອບ ແລະ ນັກກວດສອບ**

ຂໍ້ຫ້າມສໍາລັບ ບໍລິສັດກວດສອບ ໃຫ້ປະຕິບັດຕາມທີ່ໄດ້ກໍານົດນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 177. ນອກຈາກນັ້ນ ຍັງມີຂໍ້ຫ້າມເພີ່ມເຕີມ ດັ່ງນີ້:

1. ອະນຸຍາດໃຫ້ພະນັກງານທີ່ບໍ່ນອນຢູ່ໃນບັນຊີລາຍຊື່ທີ່ໄດ້ຜ່ານການຮັບຮອງຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຂອງບໍລິສັດຕົນ ມາເຄື່ອນໄຫວໃຫ້ການບໍລິການດ້ານການກວດສອບໃນຂົງເຂດວຽກງານຫຼັກຊັບ;

2. ມີຜົນປະໂຫຍດກ່ຽວຂ້ອງກັບ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ທີ່ຕົນໃຫ້ບໍລິການບໍ່ວ່າທາງກົງ ຫຼື ທາງອ້ອມ ເປັນຕົ້ນແມ່ນການຮັບ ຫຼື ໃຫ້ສິນບົນຕໍ່ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ຫຼື ຮຽກຮ້ອງຜົນປະໂຫຍດອື່ນຈາກ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ຫຼື ຜູ້ທີ່ມີສ່ວນກ່ຽວຂ້ອງກັບ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ໃນນາມຕົນເອງ ຫຼື ບຸກຄົນອື່ນ ເພື່ອຜົນປະໂຫຍດຕົນເອງ ຫຼື ບຸກຄົນອື່ນນອກຈາກຄ່າບໍລິການທີ່ໄດ້ຕົກລົງກັນໄວ້ກັບລູກຄ້າຂອງຕົນ;

3. ປັບປຸງ, ປ່ຽນແປງຂໍ້ມູນ ແລະ ເອກະສານທີ່ຕິດພັນກັບ ການບັນຊີ ແລະ ລາຍງານການເງິນຂອງກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ໂດຍບໍ່ຖືກຕ້ອງກັບຄວາມເປັນຈິງ ແລະ ໄດ້ສ້າງຄວາມເສຍຫາຍເກີດຂຶ້ນ;

4. ສົ່ງນັກກວດສອບທີ່ບໍ່ຄົບເງື່ອນໄຂ ລົງໄປໃຫ້ບໍລິການດ້ານການບັນຊີ ແລະ ການກວດສອບຕໍ່ກັບກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ;

5. ລະເມີດກົດຈັນຍາບັນດ້ານການບັນຊີ ແລະ ການກວດສອບ ທີ່ໄດ້ຮັບການຮັບຮອງຈາກອົງການທີ່ມີສິດອໍານາດກ່ຽວຂ້ອງ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ;

6. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ເກີນຂອບເຂດ ທີ່ໄດ້ກໍານົດໄວ້ໃນ ມາດຕາ 16 ຂອງຂໍ້ຕົກລົງສະບັບນີ້;

7. ສ້າງຄວາມຫຍຸ້ງຍາກໃຫ້ກັບ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ຫຼື ເປີດເຜີຍຄວາມລັບຂອງ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ທີ່ຕົນໃຫ້ບໍລິການ ໂດຍບໍ່ໄດ້ຮັບອະນຸຍາດຈາກ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ຍົກເວັ້ນ ມີຄໍາສັ່ງຂອງອົງການທີ່ມີສິດອໍານາດທີ່ກ່ຽວຂ້ອງ;

8. ໃຫ້ການບໍລິການດ້ານການບັນຊີ ແລະ ການກວດສອບ ແກ່ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ໃນໄລຍະເວລາທີ່ຖືກໃຈະ;

9. ສືບຕໍ່ໃຫ້ບໍລິການດ້ານການບັນຊີ ແລະ ການກວດສອບ ໃນກໍລະນີ ບໍ່ຕໍ່ອາຍຸໃບຮັບຮອງ ຕາມທີ່ໄດ້ກໍານົດໄວ້ໃນຂອງຂໍ້ຕົກລົງສະບັບນີ້;

10. ໃຫ້ບໍລິສັດກວດສອບ ທີ່ບໍ່ໄດ້ຮັບການຮັບຮອງຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ໃຫ້ການບໍລິການກວດສອບແທນຕົນ;

11. ໃຫ້ການບໍລິການດ້ານບັນຊີ ແລະ ກວດສອບ ໃຫ້ຫົວໜ່ວຍທີ່ຖືບັນຊີບໍ່ຖືກຕ້ອງ ຕາມລະບຽບກົດໝາຍວ່າດ້ວຍການບັນຊີ ແລະ ການກວດສອບ;

12. ລາຍງານລ່າຊ້າ ຫຼື ບໍ່ລາຍງານ ຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຕາມທີ່ໄດ້ກໍານົດໄວ້ໃນຂໍ້ຕົກລົງສະບັບນີ້;

13. ມີພຶດຕິກໍາອື່ນທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

14. ຂໍ້ຫ້າມອື່ນ ຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

ບໍລິສັດກວດສອບ ທີ່ໄດ້ຮັບການຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເພື່ອໃຫ້ການບໍລິການທາງດ້ານການບັນຊີ ແລະ ການກວດສອບ ໃນ ກະດານຊື້ ຂາຍ ຮຸ້ນວິສາຫະກິດ ຂະໜາດນ້ອຍ ແລະ ກາງ ຫ້າມເຄື່ອນໄຫວໃຫ້ການບໍລິການດັ່ງກ່າວໃນ ກະດານຊື້ ຂາຍຫຼັກຊັບຕະຫຼາດຫຼັກຊັບລາວ.

ຂໍ້ຫ້າມສຳລັບ ນັກກວດສອບ ມີ ດັ່ງນີ້:

1. ມີຜົນປະໂຫຍດກ່ຽວຂ້ອງກັບ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ທີ່ຕົນໃຫ້ບໍລິການບໍ່ວ່າທາງກົງ ຫຼື ທາງອ້ອມ ເປັນຕົ້ນແມ່ນການຮັບ ຫຼື ໃຫ້ສິນບົນ, ສວຍໃຊ້ຕຳແໜ່ງ, ໜ້າທີ່, ສິດອຳນາດ ຕໍ່ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ຫຼື ຮຽກຮ້ອງຜົນປະໂຫຍດອື່ນຈາກ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ຫຼື ຜູ້ທີ່ມີສ່ວນກ່ຽວຂ້ອງກັບ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ໃນນາມຕົນເອງ ຫຼື ບຸກຄົນອື່ນທີ່ຕິດພັນກັບການໃຫ້ການບໍລິການຂອງຕົນ ເພື່ອຜົນປະໂຫຍດຕົນເອງ ຫຼື ບຸກຄົນອື່ນ ນອກຈາກຄ່າບໍລິການທີ່ໄດ້ຕົກລົງກັນໄວ້ກັບລູກຄ້າຂອງຕົນ;

2. ໃຫ້ການບໍລິການດ້ານການບັນຊີໃນ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ທີ່ຕົນໃຫ້ການບໍລິການດ້ານການກວດສອບ;

3. ສັງກັດຢູ່ 2 ບໍລິສັດກວດສອບ ຫຼື ຫຼາຍກວ່ານັ້ນ ໃນເວລາດຽວກັນ;

4. ປັບປຸງ, ປ່ຽນແປງຂໍ້ມູນ ແລະ ເອກະສານທີ່ຕິດພັນກັບ ການບັນຊີ ແລະ ການກວດສອບ, ລາຍງານການເງິນຂອງ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ໂດຍບໍ່ຖືກຕ້ອງກັບຄວາມເປັນຈິງ;

5. ໃຫ້ບຸກຄົນອື່ນຢືມ ຫຼື ຢືມໃບຢັ້ງຢືນວິຊາຊີບການບັນຊີ ຈາກບຸກຄົນອື່ນ ເພື່ອເຄື່ອນໄຫວໃຫ້ການບໍລິການດ້ານການບັນຊີ ແລະ ການກວດສອບ;

6. ປອມແປງໃບຢັ້ງຢືນນັກວິຊາຊີບການບັນຊີ ແລະ ໃບຮັບຮອງເປັນນັກກວດສອບໃນຂົງເຂດວຽກງານຫຼັກຊັບຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

7. ລະເມີດກົດຈັນຍາບັນດ້ານການບັນຊີ ແລະ ການກວດສອບ ທີ່ໄດ້ຮັບການຮັບຮອງຈາກອົງການທີ່ມີສິດອຳນາດກ່ຽວຂ້ອງ ແລະ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ໃນການກວດສອບເກີນຂອບເຂດ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 16 ຂອງຂໍ້ຕົກລົງສະບັບນີ້;

9. ສ້າງຄວາມຫຍຸ້ງຍາກໃຫ້ກັບ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ຫຼື ເປີດເຜີຍຄວາມລັບຂອງກຸ່ມເປົ້າໝາຍທີ່ຕົນໃຫ້ບໍລິການ ໂດຍບໍ່ໄດ້ຮັບອະນຸຍາດຈາກ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ຍົກເວັ້ນ ມີຄຳສັ່ງຂອງອົງການທີ່ມີສິດອຳນາດທີ່ກ່ຽວຂ້ອງ;

10. ໃຫ້ການບໍລິການດ້ານການບັນຊີ ແລະ ການກວດສອບ ແກ່ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ໃນໄລຍະເວລາທີ່ຖືກໂຈະ;

11. ລົງລາຍເຊັນໃສ່ບົດລາຍງານການກວດສອບໃນນາມບໍລິສັດກວດສອບ ໂດຍທີ່ບໍ່ໄດ້ຮັບໃບອະນຸຍາດເປັນນັກກວດສອບຕາມກົດໝາຍຈາກ ກະຊວງການເງິນ;

12. ສືບຕໍ່ໃຫ້ບໍລິການດ້ານການບັນຊີ ແລະ ການກວດສອບ ໃນກໍລະນີ ບໍ່ຕໍ່ອາຍຸໃບຮັບຮອງ ຕາມທີ່ໄດ້ກຳນົດໄວ້ໃນຂອງຂໍ້ຕົກລົງສະບັບນີ້;

13. ໃຫ້ຜູ້ທີ່ບໍ່ໄດ້ຮັບການຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃຫ້ການບໍລິການດ້ານວຽກງານການບັນຊີ ແລະ ການກວດສອບ ແທນຕົນ;

14. ເປັນຜູ້ຖືຮຸ້ນ ຫຼື ມີຮຸ້ນສ່ວນ ໃນກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ;

15. ມີພຶດຕິກຳອື່ນທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

16. ຂໍ້ຫ້າມອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 30 ນະໂຍບາຍຕໍ່ຜູ້ມີຜົນງານ

ບໍລິສັດກວດສອບ, ນັກກວດສອບ, ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການເຄື່ອນໄຫວໃຫ້ການບໍລິການດ້ານການບັນຊີ ແລະ ການກວດສອບ ໃນຂົງເຂດວຽກງານຫຼັກຊັບ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍຕາມຄວາມເໝາະສົມ ຫຼື ນະໂຍບາຍອື່ນ ຕາມການກຳນົດໄວ້ໃນລະບຽບສະເພາະ.

### ມາດຕາ 31 ມາດຕະການຕໍ່ຜູ້ລະເມີດ

ບໍລິສັດກວດສອບ, ນັກກວດສອບ, ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການເຄື່ອນໄຫວໃຫ້ການບໍລິການດ້ານການບັນຊີ ແລະ ການກວດສອບ ໃນຂົງເຂດວຽກງານຫຼັກຊັບ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການ ສຶກສາອົບຮົມ ຫຼື ກ່າວເຕືອນ, ປັບໃໝ ແລະ ມາດຕະການເພີ່ມເຕີມ ດັ່ງນີ້:

ມາດຕະການສຶກສາອົບຮົມ ຫຼື ກ່າວເຕືອນ ແມ່ນໃນກໍລະນີທີ່ມີພຶດຕິກຳ ຫຼື ການລະເມີດໃນລັກສະນະ ດັ່ງລຸ່ມນີ້:

1. ການເປັນລະເມີດຄັ້ງທຳອິດ ທີ່ມີລັກສະນະເບົາ ເປັນຕົ້ນ ຍື່ນເອກະສານຂໍຕໍ່ອາຍຸໃບຮັບຮອງເປັນບໍລິສັດກວດສອບ ແລະ ນັກກວດສອບ ກ່ອນວັນທີໃບຮັບຮອງຈະໝົດອາຍຸ ຕໍ່າກວ່າ 45 ວັນ, ລາຍງານລ່າຊ້າ, ບໍ່ໃຫ້ການຮ່ວມມືກັບ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ, ບໍ່ສະໜອງຂໍ້ມູນ ແລະ ເອກະສານ ຕາມການຮຽກຮ້ອງຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຫຼື ພາກສ່ວນອື່ນທີ່ກ່ຽວຂ້ອງ ແລະ ກໍລະນີການລະເມີດອື່ນທີ່ສ້າງຄວາມເສຍຫາຍບໍ່ເກີນ 1.000.000 ກີບ;
2. ການລະເມີດບໍ່ມີການຮ້ອງຟ້ອງ ຫຼື ແຈ້ງຄວາມ ຂອງຜູ້ຖືກເສຍຫາຍ ແລະ ຄູ່ກໍລະນີ ສາມາດຕົກລົງ ຫຼື ແກ້ໄຂ ຮ່ວມກັນໄດ້;
3. ມີພຶດຕິກຳທີ່ຂັດກັບຂໍ້ຕົກລົງສະບັບນີ້ ແຕ່ບໍ່ແມ່ນການລະເມີດຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 29 ຂອງຂໍ້ຕົກລົງສະບັບນີ້;
4. ກໍລະນີອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ມາດຕະການປັບໃໝ ແມ່ນໃນກໍລະນີທີ່ມີພຶດຕິກຳ ຫຼື ການລະເມີດໃນລັກສະນະ ດັ່ງລຸ່ມນີ້:

1. ການລະເມີດຄັ້ງທຳອິດ ທີ່ມີລັກສະນະຮ້າຍແຮງ ຊຶ່ງການລະເມີດສ້າງຄວາມເສຍຫາຍເກີນ 1.000.000 ກີບ ຫຼື ຖືກປະຕິບັດມາດຕະການສຶກສາອົບຮົມ ຫຼື ກ່າວເຕືອນແລ້ວ ແຕ່ຍັງສືບຕໍ່ລະເມີດ ເປັນຄັ້ງທີ 2 ຈະຖືກປັບໃໝ ຈຳນວນ 2 ເທົ່າ ຂອງມູນຄ່າຄວາມເສຍຫາຍທີ່ເກີດຈາກການລະເມີດຂອງຕົນ;
2. ບໍລິສັດກວດສອບ, ນັກກວດສອບ ແລະ ກຸ່ມເປົ້າ ໝາຍກ່ຽວກັບວຽກງານຫຼັກຊັບ ທີ່ລະເມີດຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝ 2 ເທົ່າ ຂອງມູນຄ່າຄວາມເສຍຫາຍທີ່ເກີດຂຶ້ນຈາກການລະເມີດຂອງຕົນ.

ມາດຕະການເພີ່ມເຕີມຕໍ່ ບໍລິສັດກວດສອບ ແລະ ນັກກວດສອບ ມີດັ່ງນີ້:

1. ໃຫ້ແກ້ໄຂການລະເມີດຂອງຕົນຄືນໃຫ້ຖືກຕ້ອງ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ;

2. ໂຈະ ການໃຫ້ການບໍລິການທາງດ້ານການກວດສອບ ແລະ ໃບຮັບຮອງນັກກວດສອບ;

3. ຖອນ ໃບຮັບຮອງເປັນບໍລິສັດກວດສອບ ແລະ ໃບຮັບຮອງນັກກວດສອບ;

4. ເປີດເຜີຍ ກ່ຽວກັບການລະເມີດຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ຕົກລົງສະບັບນີ້ ລົງໃນເວັບໄຊ ຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ພາຍຫຼັງທີ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ອອກຂໍ້ຕົກລົງປັບໃໝ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 32 ການຈັດຕັ້ງປະຕິບັດ**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ບໍລິສັດກວດສອບ, ນັກກວດສອບ, ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກັບການເຄື່ອນໄຫວໃຫ້ການບໍລິການດ້ານການບັນຊີ ແລະ ການກວດສອບ ໃນຂົງເຂດວຽກງານຫຼັກຊັບ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 33 (ປັບປຸງ) ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນ ຂໍ້ຕົກລົງວ່າດ້ວຍ ການຮັບຮອງບໍລິສັດກວດສອບ (ສະບັບປັບປຸງ) ສະບັບເລກທີ 26/ຄຄຊ, ລົງວັນທີ 3 ກັນຍາ 2021.

ຮັກສາການ. ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ

ປະທານ